# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທົ່ວລະບົບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ 2 ປີ 2017.




ໃນວັນທີ 23-24 ສິງຫາ 2017, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 02/2017 ຢູ່ທີ່ສຳນັກງານໃຫຍ່ ທຄຕລ. ກອງປະຊຸມ ໄດ້ຈັດຂຶ້ນພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະສູນ ແລະ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດ 80 ກວ່າທ່ານ.




ກອງປະຊຸມ ໄດ້ປະເມີນຄືນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບ ໃນໄຕມາດ 02/2017. ນອກນັ້ນ, ກອງປະຊຸມຍັງໄດ້ປຶກສາບັນຫາຂໍ້ຄົງຄ້າງ, ຖອດຖອນບົດຮຽນເຊິ່ງກັນ ແລະ ກັນລະຫວ່າງ ບັນດາສາຂາ ແລະ ພະແນກການຕ່າງໆໃນສໍານັກງານໃຫຍ່ເຊັ່ນ: ການຄຸ້ມຄອງ-ແກ້ໄຂ NPL, ການຂາຍຜະລິດຕະພັນ, ການປັບປຸງການບໍລິການ, ການຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດວຽກງານຕ່າງໆທີ່ສໍາຄັນ ເພື່ອໃຫ້ ທຄຕລ ມີການດໍາເນີນງານທີ່ດີກວ່າເກົ່າ.

ຜ່ານການປຶກສາຫາລື ເຫັນໄດ້ວ່າ ທຄຕລ ມີຜົນການດໍາເນີນທຸລະກິດ ໃນທົ່ວປະເທດ ຢູ່ໃນລະດັບດີສົມຄວນ ແລະ ມີຫລາຍວຽກງານທີ່ສາມາດບັນລຸແຜນການທີ່ໄດ້ກໍານົດໄວ້. ນອກຈາກນີ້, ທຄຕລ ກໍ່ຍັງຈະໄດ້ເອົາໃຈໃສ່ປັບປຸງແກ້ໄຂວຽກງານທີ່ຍັງຄົງຄ້າງ ເພື່ອໃຫ້ ທຄຕລ ສາມາດບັນລຸແຜນງານ ແລະ ແຜນທຸລະກິດຕາມເປົ້າໝາຍປີ 2017.